ການກວດຫາຄວາມຜິດປົກກະຕິສຳຫຼັບ ຊາວໂອໄຮໂອ(Ohio)

ຄວາມຜິດປົກກະຕິຂອງກົດອາມິໂນ :ສະພາວະນີ້ເກີດມາຈາກ ຮ່າງກາຍຂອງເດັກມີບັນຫາໃນການນຳໃຊ້ກົດອາມິໂນໃດ ໜຶ່ງທີ່ພົບໃນອາຫານເຮັດໃຫ້ພາຍຫຼັງການເກີດຮ່າງກາຍໄດ້ສ້າງ ສານພິດທາງເຄມີຂຶ້ນ ແລະ ສາມາດທຳລາຍສະໝອງ ແລະ ສ່ວນອື່ນໆຂອງ ຮ່າງກາຍ.ເຮັດໃຫ້ອາດມີບັນຫາດ້ານ ການພັດທະນາດ້ານສະຕິປັນຍາຊັກຊ້າແລະເກີດບັນຫາດ້ານສຸຂະ ພາບອື່ນໆອີກ.ການຄວບຄຸມອາຫານສະເພາະຫຼືການ ກິນອາຫານເສີມອາດຊ່ວຍຮັກສາອາການນີ້ໄດ້. ໂຄງການ ກວດຫາອາການຜິດປົກກະຕິໃນເດັກຂອງຣັຖໂອໄຮໂອ ຈະໄດ້ກວດຫາພະຍາດຕ່າງໆຄື: Argininemia, Argininosuccinic Acidemia, Citrullinemia, Homocystinuria, Hypermethioninemia, Maple Syrup Urine Disease, Phenylketonuria (PKU).

ຄວາມຜິດປົກກະຕິຂອງຕ່ອມ:
ການຜິດປົກກະຕິຂອງຕ່ອມ ອະດີນັລມາແຕ່ກຳເນີດ (CAH) ເປັນອາການຜິດປົກກະຕິທີ່ມີຜົນກະທົບຕໍ່ຕ່ອມອະດີນັລ (ຕ່ອມທີ່ຄວບຄຸມເກືອແລະນຳ້ໃນຮ່າງກາຍ) ເຮັດໃຫ້ເກີດຄວາມບໍ່ດຸນດ່ຽງຂອງຮໍໂມນທີ່ຜະລິດຈາກຕ່ອມດັ່ງກ່າວ. ນີ້ສາມາດເຮັດໃຫ້ເກີດບັນຫາໃນການລະບາຍ ນຳ້ອອກຈາກຮ່າງກາຍ, ຄວາມດັນເລືອດຕ່ຳ,ຫຼືອາດ ເຖິງຕາຍໄດ້. ການກິດຢາອາດສາມາດປ້ອງກັນບໍ່ໃຫ້ເກີດ ບັນຫາຮ້າຍແຮງແລະບັນຫາດ້ານພັດທະນາການທາງສະຕິປັນຍາຊ້າ ໄດ້.

ອາການບົກຜ່ອງຂອງຕ່ອມໄທຣອຍທີ່ເປັນມາແຕ່ກຳເນີດ ເກີດຈາກຮ່າງກາຍຂອງເດັກບໍ່ສາມາດສ້າງຮໍໂມນໄທຣອຍ ໄດ້ພຽງພໍເພື່ອໃຫ້ຮ່າງກາຍເຕີບໃຫຍ່ໄດ້. ການກິດຢາອາດ ສາມາດປ້ອງກັນບໍ່ໃຫ້ເກີດບັນຫາຮ້າຍແຮງແລະບັນຫາດ້ານພັດທ ະນາການທາງສະຕິປັນຍາຊ້າໄດ.

ການຜິດປົກກະຕິຂອງກົດໄຂມັນ:
ກຸ່ມອາການປະເພດນີ້ລວມມີສະພາວະທີ່ຮ່າງກາຍບໍ່ສາ ມາດປ່ຽນໄຂມັນເປັນພະລັງງານໄດ້. ເຮັດໃຫ້ເດັກໝົດສະຕິ, ຮ່າງກາຍອ່ອນແອ ແລະມີບັນຫາດ້ານຫົວໃຈແລະ ການ ຫາຍໃຈໄດ້. ການຄວບຄຸມອາຫານ, ກິນອາຫານເລື້ອຍໆ ແລະ ການກິນຢາອາດຊ່ວຍປ້ອງກັນອາການໄດ້. ໂຄງການກວດຫາ ອາການຜິດປົກກະຕິໃນເດັກຂອງຣັຖ ໂອໄຮໂອຈະໄດ້ກວດຫາພະຍາດຕ່າງໆຄື: Carnitine/Acylcarnitine Translocase Deficiency, Carnitine Palmitoyl Transferase Deficiency Type II, Carnitine UptakeDefect, Glutaric Acidemia Type II, Long Chain Hydroxyacyl CoA Dehydrogenase Deficiency, Medium Chain Acyl CoA Dehydrogenase Deficiency (MCAD), Short Chain AcylCoA Dehydrogenase Deficiency, Trifunctional Protein Deficiency, Very Long Chain AcylCoA Dehydrogenase Deficiency.

ອາການຜິດປົກກະຕິຂອງກົດອິນຊີ:
ເດັກນ້ອຍທີ່ມີອາດການຜິດປົກກະຕິນີ້ບໍ່ສາມາດນຳຈັດຂອງເສຍອອກ ຈາກເລືອດໄດ້. ອາດເຮັດໃຫ້ເດັກມີອາການຮາກ, ມີນຳ້ຕານໃນເລືອດຕ່ຳ, ມີອາການຮຸນແຮງຫຼືຕາຍໄດ້. ການຮັກສາອາການນີ້ອາດລວມໄປເຖິງການຄວບຄຸມອາຫານ ແລະກິນຢາ. ໂຄງການກວດຫາອາການຜິດປົກກະຕິໃນ ເດັກຂອງຣັຖໂອໄຮໂອຈະໄດ້ກວດຫາ: 2Methylbutyryl CoA Dehydrogenase Deficiency, 3Hydroxy3Methylglutaryl CoA Lyase Deficiency, 3Ketothiolase Deficiency, 3 MethylcrotonylCoA Carboxylase Deficiency, Glutaric Acidemia Type I, IsobutyrylCoA Dehydrogenase Deficiency, Isovaleric Acidemia, Methylmalonic Acidemia, Multiple CoA Carboxylase Deficiency, Propionic Acidemia.

.ການກວດຫາອາການຜິດປົກກະຕິອື່ນໆ:

ອາການຂາດສານໄບໂອຕິນ (biotine)
ເກີດຂຶ້ນເມື່ອເດັກບໍ່ສາມາດໃຊ້ວິຕາມິນ ໄບໂອຕິນ ໄດ້ປົກກະຕິ. ເຮັດໃຫ້ຜິດໜັງບໍ່ລຽບ, ໝົດສະຕິ, ເສຍການໄດ້ຍິນ, ຫຼືມີພັດທະນາດ້ານສະຕິປັນຍາຊ້າ. ອາດປ້ອງກັນດ້ວຍ ການຄວບຄຸມອາຫານທີ່ເພີ່ມວິຕາມິນໄບໂອຕິນ.

ການເກີດເນື້ອເຍື່ອໃນພົກຍ່ຽວ ແມ່ນເກີດຈາກພະຍາດທີ່ຢູ່ ໃນປອດ ແລະ ລະບົບຍ່ອຍອາຫານທີ່ສາມາດເຮັດໃຫ້ ມີອາການຕິດເຊື້ອໃນໜ້າເອິກ ແລະ ຂາດສານອາຫານ. ການກວດພົບແຕ່ຫົວທີອາດຊ່ວຍປັບປຸງການເຕີບໃຫຍ່ຂອງ ເດັກແລະຫຼຸດຄວາມສ່ຽງການຕິດເຊື້ອ.

ອາການກາລາໂຊເມຍ ເກີດຂຶ້ນເມື່ອຮ່າງກາຍຂອງເດັກບໍ່ ສາມາດຍ່ອຍສານບາງສ່ວນຂອງນຳ້ໃນນົມ (ກາເລັກໂຕສ). ການຄວບຄຸມອາຫານທີ່ເສດທີ່ບໍ່ມີນຳ້ຕານອາດຊ່ວຍປ້ອງກັນການເ ສຍຫາຍທາງດ້ານສະໝອງແລະຕັບໄດ້.

ພະຍາດໃນຈຸລັງ ແລະ ພະຍາດໂຮໂມໂລບິໂນພາທີ ອື່ນໆ ແມ່ນອາການຜິດປົກກະຕິທີ່ກະທົບຈຸລັງເລືອດແດງ. ອາການຜິດປົກກະຕິນີ້ສາມາດເຮັດໃຫ້ເກີດຄວາມເຈັບປວດ, ຕິດເຊື້ອເລື້ອຍໆ, ມີບັນຫາດ້ານສຸຂະພາບຮ້າຍແຮງອື່ນໆ ຫຼືອາດຕາຍໄດ້. ການກິນຢາຕ້ານເຊື້ອທຸກມື້ສາມາດຫຼຸດ ໂອກາດຕິດເຊື້ອແລະບັນຫາອື່ນໆໄດ້ຫຼາຍ

Rev. 07 /2006 01PT $x.xx/copy

ເປັນຫຍັງລູກຂອງຂ້ອຍ ຈຶ່ງຕ້ອງໄດ້ຮັບການຫາ ຄວາມຜິດປົກກະຕິ?

ໂຄງການກວດຫາ ຄວາມຜິດປົກກະຕິ ໃນເດັກນ້ອຍເກີດ ໃໝ່ແຫ່ງເມືອງ ໂອໄຮໂອ (Ohio)

ການກວດການທີ່ສາມາດຮັ ກສາຊີວິດຂອງລູກທ່ານໄດ້.

ເປັນຫຍັງລູກຂອງຂ້ອຍຈຶ່ງຕ້ອງໄດ້ຮັບການ ກວດຫາອາການຜິດປົກກະຕິເວລາເກີດໃໝ່?

- ການຫາອາການຜິດປົກກະຕິເດັກເກີດໃຫມ່ສາມາດ ລະບຸບັນຫາດ້ານສຸຂະພາບໄດ້ແຕຫົວທີ.
- ເດັກນ້ອຍທີ່ມີບັນຫາດ້ານສຸຂະພາບທີ່ພົບໄດ້ ຍາກອາດເບິ່ງຄືແຂງແຮງ ໃນຕອນເກີດ.
- ຖ້າພົບບັນຫາ ຈະໄດ້ຮັກສາແຕ່ຫົວທີ່ເພື່ອປ້ອງກັນ ບັນຫາເຊັ່ນບັນຫາການພັດທະນາດ້ານສະຕິປັນຍາຊ້າ .
- ກົດໝາຍຂອງຣັຖ ໂອໄຮໂອຮຽກຮ້ອງໃຫ້ມີການ ກວດສອບເດັກເກີດໃຫມ່ໃນຣັຖທຸກຄົນ.

ການທົດສອບເດັກຈະເຮັດແນວໃດແລະເມື່ອໃດ?

- ກ່ອນຈະອອກຈາກໂຮງໝໍຈະໄດ້ມີການເຈາະ ເລືອດຈາກຂໍ້ຂອງເດັກ.
- ຕົວຢ່າງເລືອດຈະຖືກສົ່ງໄປຫ້ອງທົດລອງກວດສອບ ເດັກເກີດໃຫມ່ແຫ່ງຣັຖໂອໄຮໂອ.
- ການກວດສອບເດັກເກີດໃໝ່ຈະຕ້ອງເຮັດຢ່າງໜ້ອຍ 24 ຊົ່ວໂມງຫຼັງຈາກເກີດ ລະກ່ອນເດັກມີອາຍຸຮອດຫ້າມື້.
- ຖ້າເດັກບໍ່ໄດ້ເກີດທີ່ໂຮງໝໍບໍ? ຕິດຕໍ່ໝໍຕຳແຍ, ທ່ານໝໍ ຫຼືພະແນກສຸຂະພາບທ້ອງຖິ່ນ ເພື່ອຊ່ວຍໃນການຈັດການກວດຫາອາການຜິດປົກກະຕິ ເດັກເກີດ ໃໝ່ .

ຂ້ອຍຈະຮູ້ຜົນຂອງການກວດລູກຂ້ອຍໄດ້ແນວໃດ?

- ຜົນຂອງການກວດກັ່ນກອງລູກຂອງທ່ານຈະຖືກສົ່ງໄປ ໂຮງໝໍທີ່ເດັກເກີດແລະທ່ານໝໍທີ່ເບິ່ງແຍງສຸຂະພາບ ຂອງລູກທ່ານ.
- ໃຫ້ແນ່ໃຈວ່າທັ້ງໂຮງໝໍທີ່ລູກທ່ານເກີດແລະທ່ານໝໍທີ່ ເບິ່ງແຍງສຸຂະພາບລູກຂອງທ່ານມີທີ່ຢູ່ແລະເບີໂທຂອງ ທ່ານ ຢ່າງຖືກຕ້ອງ ໃນກໍລະນີທີ່ຕ້ອງຕິດຕໍ່ກັບທ່ານ.
- ທ່ານຄວນຈະຖາມຜົນການກວດເມື່ອທ່ານນຳລູກທ່ານ ໄປກວດສຸຂະພາບຄັ້ງທຳອິດ.

ຈະເຮັດແນວໃດເມື່ອລູກຂອງຂ້ອຍຕ້ອງກວດເພີ່ມ?

- ລູກຂອງທ່ານຕ້ອງກວດຄືນຫາກທ່ານອອກ ຈາກ ໂຮງໝໍກ່ອນ 24 ຊົ່ວໂມງ.
- ເດັກບາງຄົນຕ້ອງກວດຄືນຍ້ອນມີບັນຫາ ໃນຕົວຢ່າງເລືອດທີ່ເຈາະໄປ.
- ເດັກບາງຄົນຕ້ອງກວດຄືນຍ້ອນວ່າການກວດ ຄັ້ງທຳອິດສະແດງວ່າອາດມີບັນຫາດ້ານສຸຂະພາບ .
- ທ່ານໝໍທີ່ເບິ່ງແຍງສຸຂະພາບລູກຂອງທ່ານ ຈະຕິດຕໍ່ກັບທ່ານຫາກລູກຂອງທ່ານຕ້ອງກວດເພີ່ມ.
- ພວກເຂົາຈະບອກທ່ານວ່າເປັນຫຍັງລູກຂອງ ທ່ານຈຶ່ງຕ້ອງກວດຄືນ ແລະທ່ານຕ້ອງເຮັດຫຍັງຕໍ່.
- **ຖ້າລູກຂອງທ່ານຕ້ອງກວດເພີ່ມຕ້ອງເຮັດໃນທັນທີ.**

ໂຄງການກວດຫາອາການຜິດປົກກະຕິຂອງໂອໄຮໂອ ກວດຫາບັນ ຫາສຸຂະພາບຈັກບັນຫາ ?

- ຣັຖໂອໄຮໂອກວດຫາບັນຫາສຸຂະພາບ ສາມສິບສອງບັນຫາທີ່ແຕກຕ່າງກັນ. (ລາຍລະອຽດຢູ່ອີກດ້ານໜຶ່ງ)
- ຣັຖໂອໄຮໂອກວດຫາບັນຫາທີ່ໄດ້ຮັບການ ແນະນຳຈາກ ອົງການ March of Dimes.

ລູກຂອງຂ້ອຍສາມາດກວດສອບຫາບັນຫາອື່ນໄດ້ບໍ່ ?

- ອາດມີການກວດກັ່ນກອງສຳຫຼັບເດັກເກີດໃໝ່ ແບບອື່ນອີກນອກຈາກບັນຫາທີ່ທາງຣັຖໂອໄຮໂອຕ້ອງ ການໃຫ້ກວດຫາ. ສຳຫຼັບຂໍ້ມູນເພີ່ມເຕີມຕິດຕໍ່ : ສູນກວດກັ່ນກອງເດັກເກີດໃໝ່ ແລະ ຂໍ້ມູນກ່ຽວກັບກຳມະພັນ ແຫ່ງຊາດ ທີ່ ເບີ r@512/454-6419 or *www.genesrus.uthscsa.edu*

ຖ້າຂ້ອຍມີຄຳຖາມຕ້ອງເຮັດແນວໃດ?

- ຖ້າທ່ານມີບັນຫາຖາມທ່ານໝໍທີ່ເບິ່ງແຍງ ສຸຂະພາບລູກຂອງທ່ານ
- ເບິ່ງທີ່ເວັບໄຊ: www.odh.ohio.gov/odhPrograms/phl/newbrn/nbrn1.aspx